ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

ແຂວງຫົວພັນ

ເລກທີ່..01../ ຈຂ.ຫພ

ຊຳເໜືອ,ວັນທີ...04.../...1.../2016

# ຄຳສັ່ງດ່ວນ

## ວ່າດ້ວຍການຍຸດຕິການຂຸດຄົ້ນໄມ້ຕູບໂຄງການຕ່າງໆຢູ່ທຸກໆເມືອງທົ່ວແຂວງ

**ເຖິງ :** ທ່ານເຈົ້າເມືອງທຸກໆເມືອງທົ່ວແຂວງຫົວພັນ.

- ອີງຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສ ປ ປ ລາວ ສະບັບເລກທີ 03 / ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີສະບັບເລກທີ່ 32 /ນຍ, ລົງວັນທີ 6 / 3 / 2012. ວ່າດ້ວຍການຮັບຮອງເອົາມະຕິກອງປະຊຸມ ການຄຸ້ມຄອງໄມ້, ການກວດກາໄມ້ ແລະ ການທຸລະກິດໄມ້.
- ອີງຕາມ ການຄົ້ນຄ້ວາເປັນເອກະພາບຂອງ ຄະນະປະຈຳພັກແຂວງໃນກອງປະຊຸມຄະນະຄຸ້ມຄອງໄມ້ຂັ້ນແຂວງ ຄັ້ງວັນທີ 7 ຕຸລາ 2015.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານປ່າໄມ້ ໃຫ້ມີຄວາມສັກສິດ ແລະ ເຂັ້ມງວດ ກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ແລະ ເພື່ອເຮັດໃຫ້ພະແນກການ, ຫ້ອງການທີ່ກ່ຽວຂ້ອງຂອງລັດ ແລະ ອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໄດ້ເສີມຂະຫຍາຍຄວາມເປັນເຈົ້າການໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ໃຫ້ມີປະສິດຕິຜົນ ແລະ ເພື່ອສະກັດກັ້ນປະກົດການຫຍໍ້ທໍ້ໃນການລະເມີດກົດໝາຍປ່າໄມ້.

## ເຈົ້າແຂວງຫົວພັນອອກຄຳສັ່ງດັ່ງນີ້:

1. ໃຫ້ທ່ານເຈົ້າເມືອງ ຫຼື ການນຳຂັ້ນເມືອງຍຸດຕິການສຳລະໜີ້ສິນ ດ້ວຍການອະນຸຍາດໂກຕາໄມ້ໃຫ້ແກ່ຜູ້ລົງທືນໂດຍກົງ, ຕ້ອງຫັນໄປສູ່ການສຳລະດ້ວຍງົບປະມານ, ເປັນລະບົບ, ໂປ່ງໃສ, ມີປະສິດຕິພາບ ເພື່ອຫຼີກເວັ້ນການສວຍໂອກາດ ແລະ ການເສຍຜົນປະໂຫຍດຂອງຊາດແບບບໍ່ສົມເຫດຜົນ ແລະ ບໍ່ອະນຸຍາດໃຫ້ເອົາໄມ້ແລກປ່ຽນໂຄງການໃນທຸກກໍລະນີ, ຖ້າໃນປະຈຸບັນຫາກທາງເມືອງຍັງມີໂຄງການກໍ່ສ້າງທີ່ເອົາໄມ້ຕູບໂຄງການແມ່ນໃຫ້ທ່ານເຈົ້າເມືອງອອກຂໍ້ຕົກລົງລົບລ້າງໂຄງການດັ່ງກ່າວ.
2. ບໍ່ອານຸຍາດໃຫ້ເຈົ້າເມືອງ ຫຼື ການນຳເມືອງຂັ້ນຕ່າງໆພາຍໃນເມືອງ ອອກໂກຕາໄມ້ປຸກສ້າງ ຫຼື ອອກໃບອະນຸຍາດຂຸດຄົ້ນໄມ້ຢູ່ພາຍໃນເມືອງຂອງຕົນຢ່າງເດັດຂາດ.

3.  ຫ້າມ  ໃຫ້ເຈົ້າເມືອງ ແລະ ຫ້ອງການກ່ຽວຂ້ອງຂັ້ນເມືອງ ອອກໃບອານຸຍາດເຄື່ອນຍ້າຍໄມ້ພາຍໃນເມືອງ ຫຼື ເຄື່ອນຍ້າຍໄມ້ອອກຕ່າງປະເທດໂດຍບໍ່ໄດ້ຮັບອານຸຍາດຈາກພາກສ່ວນກ່ຽວຂ້ອງຂັ້ນແຂວງຢ່າງເດັດຂາດ.

4.  ໃນກໍລະນີມີການລະເມີດກົດໝາຍປ່າໄມ້ຕາມມາດຕາ 101, 102, 103 ແລະ ລະບຽບການຕ່າງໆໂດຍບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດໃນຂອບເຂດທົ່ວເມືອງຂອງຕົນແມ່ນຕ້ອງໄດ້ປະຕິບັດຕາມກົດໝາຍປ່າໄມ້ ໃນມາດຕາ  123,  124,  125   126, 127,  128 ຢ່າງເຂັ້ມງວດໂດຍມອບໃຫ້ພາກສ່ວນກ່ຽວຂ້ອງຂັ້ນເມືອງ, ສົມທົບກັບກອງກວດກາປ່າໄມ້ ແລະ ພາກສ່ວນກ່ຽວຂ້ອງຂອງແຂວງເພື່ອແກ້ໄຂສະພາບການໃຫ້ທັນກັບເວລາ ພ້ອມທັງແກ້ໄຂເຫດການທີ່ເກີດຂຶ້ນໃຫ້ມີຄວາມສະຫງົບໂດຍໄວ.

5.  ມອບໃຫ້ເຈົ້າເມືອງ ແລະ ຫ້ອງການກ່ຽວຂ້ອງຂັ້ນເມືອງຄົ້ນຄ້ວາ ແລະ ກຳແໜ້ນຄຳສັ່ງສະບັບນີ້, ພ້ອມທັງເປັນເຈົ້າການຜັນຂະຫຍາຍໃຫ້ບັນດາຫ້ອງການ, ຂະແໜງການກ່ຽວຂ້ອງຂັ້ນເມືອງທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນຢ່າງລະອຽດ, ທົ່ວເຖິງ ແລະ ຊີ້ນຳການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ ແຂວງຫົວພັນ**

ວັນໄຊ ແພງສຸມມາ

Vanxay PHENGSOUMMA

**<u>ບ່ອນສົ່ງ</u>**

| | |
|---|---|
| - ເຈົ້າເມືອງເມືອງລະ1 ສະບັບ | 10 ສະບັບ |
| - ພະແນກອຸດສະຫະກຳ ແລະ ການຄ້າ | 1 ສະບັບ |
| - ພະແນກການເງິນແຂວງ | 1 ສະບັບ |
| - ພະແນກກະສິກຳ ແລະ ປ່າໄມ້ແຂວງ | 1 ສະບັບ |
| - ສຳເນົາ | 2 ສະບັບ |